NSW GOVERNMENT | Education

# ການຈ່າຍເງິນທາງອອນໄລນ໌ສໍາລັບພໍ່ແມ່

## ຂໍ້ມູນສໍາລັບພໍ່ແມ່ ແລະ ຜູ້ດູແລ

ດຽວນີ້ ບັນດາພໍ່ແມ່ສາມາດຈ່າຍເງິນທີ່ຕິດຄ້າງໂຮງຮຽນທາງອອນໄລນ໌ໄດ້ແລ້ວ, ໂດຍຈ່າຍຜ່ານທາງ ໜ້າສໍາລັບຈ່າຍເງິນແບບປອດໄພຊຶ່ງທະນາຄານ Westpac ເປັນຜູ້ຈັດ. ການຈ່າຍເງິນສາມາດເຮັດໄດ້ດ້ວຍການໃຊ້ບັດຊະນິດຕ່າງໆ ບໍ່ວ່າຈະເປັນແບບບັດເຄຣດິດ Visa ຫຼື MasterCard ຫຼື ບັດເດບິດ ກໍໄດ້, ແລະ ສາມາດເຮັດໄດ້ໂດຍທາງຄອມພິວເຕີ, ທາເບລຕ ຫຼື ທາງໂທຣະສັບມືຖື. ໜ້າສໍາລັບຈ່າຍເງິນນີ້ສາມາດເຂົ້າໃຊ້ໄດ້ໂດຍການ ເຂົ້າໄປທີ່ໜ້າທໍາອິດຂອງເວັບໄຊຕ໌ຂອງໂຮງຮຽນແລະດ້ວຍການເລືອກ $ Make a payment ($ ທໍາການຈ່າຍເງິນ).

ເມື່ອໄວໆມານີ້ Westpac ໄດ້ປັບປຸງລະບົບເພື່ອອະນຸໂລມໃຫ້ມີ ເວລາຫຼາຍຂຶ້ນ ເພື່ອຈະໄດ້ມີເວລາໃສ່ ຣາຍລະອຽດຕ່າງໆເຂົ້າໄປ ແລະ ເພື່ອໃຫ້ພໍ່ແມ່ສາມາດທໍາການຈ່າຍເງິນດ້ວຍການ ນໍາໃຊ້ທາງເລືອກແບບຕື່ມຂໍ້ມູນແບບອັດຕະໂນມັດ, ສະນັ້ນ ຈຶ່ງບໍ່ຕ້ອງໃສ່ຣາຍລະອຽດຂອງພວກເຂົາຊໍ້າອີກເທື່ອນຶ່ງ. ດຽວນີ້ ພໍ່ແມ່ສາມາດທໍາການຈ່າຍເງິນໂດຍຜ່ານທາງບັດເຄຣດິດຫຼືຜ່ານທາງບັດເດບິດທີ່ຫັກເງິນຈາກບັນຊີທະນາຄານຂອງຕົນໂດຍກົງ.

ລາຍການຕ່າງໆທີ່ສາມາດຈ່າຍໄດ້ກວມເຖິງການບໍຣິຈາກໃຫ້ໂຮງຮຽນແບບສມັກໃຈ, ການບໍຣິຈາກໃຫ້ວິຊາຮຽນ, ທັສນະສຶກສາ, ການຂາຍຂອງໃຫ້ນັກຮຽນ ແລະ ບັນດາ ກິດຈະກັມດ້ານສິລະປະສ້າງສັນແລະພາກປະຕິບັດ (ສິ່ງເຫຼົ່ານີ້ກວມເອົາວົງດົນຕຣີ, ລະຄອນ ແລະ ການເຕັ້ນລໍາ). ນອກນີ້ກໍຍັງມີອີກປະເພດນຶ່ງຊຶ່ງເອີ້ນວ່າ 'ອື່ນໆ, ເພື່ອກວມເອົາປະເພດຕ່າງໆທີ່ບໍ່ຖືກກວມເອົາຢູ່ໃນຫົວຂໍ້ກ່ອນ, ຄໍາວ່າ 'ອື່ນໆ, ນີ້ ສາມາດຖືກນໍາໃຊ້ເພື່ອເຮັດການຈ່າຍເງິນຂອງການລາຍງານການເງິນບັນຊີໂຮງຮຽນໃຫ້ຄົບຖ້ວນ.

ເວລາທີ່ທ່ານເຂົ້າໄປຫາ $ Make a payment ທ່ານ ຕ້ອງໃສ່ສິ່ງນີ້ເຂົ້າໄປ:

- ຊື່ຂອງນັກຮຽນ
- ຊັ້ນຮຽນ
- ວັນ ເດືອນ ປີ ເກີດ

ຣາຍລະອຽດເຫຼົ່ານີ້ທ່ານຈະຕ້ອງໃສ່ເຂົ້າໄປທຸກຄັ້ງທີ່ທ່ານ ຈ່າຍເງິນເພາະວ່າຂໍ້ມູນຂອງນັກຮຽນບໍ່ໄດ້ຖືກເກັບໄວ້ຢູ່ໃນ ລະບົບຈ່າຍເງິນ.

ອັນນີ້ແມ່ນລະບົບຈ່າຍເງິນທີ່ປອດໄພຊຶ່ງທະນາຄານ Westpac ເປັນຜູ້ຈັດ ເພື່ອໃຫ້ ແນ່ໃຈວ່າຣາຍລະອຽດຂອງບັດເຄຣດິດ ຫຼື ບັດເດບິດຂອງທ່ານຖືກບັນທຶກເອົາໄວ້ ດ້ວຍຄວາມປອດໄພ. ຣາຍລະອຽດ ເຫຼົ່ານີ້ຈະບໍ່ຖືກສົ່ງກັບຄືນໄປໃຫ້ໄປ ທາງໂຮງຮຽນ.

ທ່ານສາມາດກວດເບິ່ງແລະດັດແກ້ຣາຍລະອຽດອັນໃດອັນ ນຶ່ງຂອງການຈ່າຍເງິນໄດ້ ກ່ອນ ທີ່ການຈ່າຍເງິນນີ້ຈະຖືກດໍາເນີນຕໍ່ໄປ. ໃບເສັດຣັບສາມາດຖືກສົ່ງໃຫ້ທ່ານໂດຍທາງ ອີເມລ ຫຼື ພິມອອກມາ.

ຣາຍລະອຽດຂອງການຈ່າຍເງິນຖືກສົ່ງຜ່ານໄປໃຫ້ໂຮງຮຽນ ທຸກໆມື້ຊຶ່ງຈະມີໃບຮັບບັນທຶກໃສ່ຢູ່ໃນບັນຊີຂອງລູກທ່ານ. ຖ້າໃບເສັດຣັບຈາກໜ້າຈ່າຍເງິນໄດ້ຖືກອອກໃຫ້ທ່ານແລ້ວ ທາງ ໂຮງຮຽນຈະບໍ່ອອກໃບເສັດຮັບໃຫ້ທ່ານອີກ.

ສໍາລັບການສອບຖາມໃດໆກ່ຽວກັບການດໍາເນີນການ ດ້ານຈ່າຍເງິນທາງອອນໄລນ໌ ກະຣຸນາຕິດຕໍ່ຫ້ອງການການບໍຣິຫານຂອງທາງໂຮງຮຽນ.

### ບໍຣິການ ນາຍພາສາ ທາງໂທຣະສັບ

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດເພື່ອຕິດຕໍ່ຫາໂຮງຮຽນ ກະຣຸນາໂທຫາບໍຣິການ ນາຍພາສາ ທາງ ໂທຣະສັບຕາມໝາຍເລກ 131 450. ໃຫ້ບອກເຂົາວ່າທ່ານ ຕ້ອງການພາສາຫຍັງແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນໃຫ້. ຜູ້ຮັບສາຍຈະຫາເອົານາຍພາສາທາງໂທຣະສັບມາເວົ້າສາຍ ເພື່ອຊ່ວຍທ່ານໃນການເວົ້າລົມນັ້ນ. ທ່ານບໍ່ຕ້ອງຈ່າຍຄ່າບໍຣິການນີ້.